**ບົດຮຽນໂຮງຮຽນວັນອາທິດ**

ວັນອາທິດ ທີ 26 ພຶສພາ 2024 (05-26-2024)

---

## ຄວາມຊົມຊື່ນຍິນດີຂອງການເອົາໃຫ້

**ຈຸດສຳຄັນໃນບົດຮຽນ:** ເອົາໃຫ້ຢ່າງໃຈກວ້າງຂວາງແລະວາງໃຈພຣະເຈົ້າກັບຜົນທີ່ອອກມາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ດ້ວຍການວິ່ງເຕັ້ນຢ່າງເຕັມກຳລັງເພື່ອການກຸສົນປະຈຳປີ, ຕົວແທນຂອງອົງການກຸສົນໃນທ້ອງຖິ່ນຈຶ່ງໄດ້ເຂົ້າໄປຫາຄົນທີ່ລ້ຳລວຍທີ່ສຸດຂອງຕົວເມືອງ. ການສົນທະນານຶ່ງເປັນດັ່ງນີ້: "ທ່ານເອີຍ ປຶ້ມບັນທຶກຂອງເຮົາຣະບຸວ່າທ່ານບໍ່ເຄີຍບໍຣິຈາກເງິນໃຫ້ອົງການກຸສົນຂອງເຮົາຈັກເທື່ອ. ຂໍທ່ານເລີ່ມບໍຣິຈາກວັນນີ້ໄດ້ບໍ່?" ຊາຍຄົນນັ້ນໄດ້ຕອບຢ່າງໃຈຮ້າຍວ່າ, "ປຶ້ມບັນທຶກຂອງທ່ານບໍ່ໄດ້ບອກຄືກັນບໍ່ວ່າ ອ້າຍຂອງຂ້ອຍເປັນນັກລົບເກົ່າເປັ້ງລ່ອຍ, ແລະແມ່ຂອງຂ້ອຍເສັ້ງຕາ? ແລະສາມີຂອງນ້ອງສາວຂ້ອຍເສັຍຊີວິດແລະປະໃຫ້ນາງຕ້ອງລ້ຽງລູກນ້ອຍຄົນດຽວ? "ໂອ, ເນາະ, ຕົວແທນອົງການກຸສົນໄດ້ຕອບ. "ຂ້ອຍບໍ່ຄາດຄິດເລີຍ. ບໍ່ເຄີຍຄິດເລີຍວ່າຄົນຮັ່ງມີກໍມີພັນທະຫຼວງຫຼາຍທີ່ຕ້ອງຮັບຜິດຊອບດ້ານການເງິນຄືກັນເນາະ." "ເອີ," ຊາຍນັ້ນຕອບຢ່າງໃຈຮ້າຍ, "ຖ້າວ່າຂ້ອຍຈະບໍ່ໃຫ້ພວກເຂົາຈັກນຶ່ງເຊັນ, ແມ່ນຫຍັງທີ່ເຮັດໃຫ້ເຈົ້າຄິດວ່າຂ້ອຍເອົາໃຫ້ເງິນເຈົ້າ?" ເວົ້າຢ່າງງ່າຍໆ, ໃຫ້ຢ່າງໃຈກວ້າງຂວາງຄືມັນຕ້ອງຢືດອອກສຳລັບເຮົາບາງຄົນ! ມັນບໍ່ໄດ້ໄຫຼອອກມາຈາກຈິດວິນຍານຂອງເຮົາຕາມທັມມະຊາດ, ແມ້ແຕ່ກັບຜູ້ເຊື່ອ. ແມ່ນວ່າການບໍຣິຈາກເປັນເຣື່ອງລະອຽດອ່ອນກໍຕາມ, ພຣະທັມພຣະເຈົ້າໃຫ້ຄວາມສຳຄັນຢ່າງໃຫຍ່ຫຼວງ. ພວກເຮົາຈະໄປເບິ່ງພຣະຄັມວັກທີ່ຊົງພລັງທີ່ມີຄວາມເຂົ້າໃຈໃນການປະຕິບັດບາງວິທີທີ່ຈະເຕີບໃຫຍ່ຂຶ້ນໃນຄວາມເອື້ອເຟື້ອເພື່ອແຜ່!

*ຖ້າທ່ານມີຊັພຍາກອນບໍ່ຈຳກັດ, ມີຫຼັກສູດໃດທີ່ທ່ານຈະຈັດໄວ້ເທິງສຸດຂອງລາຍການທີ່ຈະບໍຣິຈາກ?*

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. 2 ໂກຣິນໂທ 9:6-9.

*6. ດັ່ງນີ້ແຫຼະ ຄົນທີ່ຫວ່ານພຽງເລັກນ້ອຍ ກໍກ່ຽວເກັບໄດ້ພຽງເລັກນ້ອຍ ແລະຄົນທີ່ຫວ່ານຫຼາຍ ກໍກ່ຽວເກັບໄດ້ຫຼາຍ. 7. ທຸກຄົນຈົ່ງ
ໃຫ້ຕາມທີ່ຕົນໄດ້ຄຶດໝາຍໄວ້ໃນໃຈ ບໍ່ໃຊ່ໃຫ້ດ້ວຍຄຶດເສັ້ງດາຍ ຫຼືດ້ວຍຂືນໃຈໃຫ້ ເຫດວ່າພຣະເຈົ້າຊົງຮັກຄົນນັ້ນທີ່ໃຫ້ດ້ວຍຊື່ນໃຈຍິນ
ດີ. 8. ແລະພຣະເຈົ້າຊົງຣິດອາດປະທານພຣະຄຸນອັນອຸດົມທຸກຢ່າງແກ່ເຈົ້າທັງຫຼາຍ ເພື່ອໃຫ້ພວກເຈົ້າມີທຸກສິ່ງທຸກຢ່າງພຽງພໍສຳລັບ
ຕົວສເມີ ທັງຈະມີສິ່ງຂອງບໍຣິບູນສຳລັບການງານດີທຸກຢ່າງດ້ວຍ. 9. ຕາມທີ່ມີຂຽນໄວ້ໃນພຣະຄັມພີວ່າ, "ເພິ່ນບໍຣິຈາກຢ່າງກວ້າງ
ຂວາງໃຫ້ແກ່ຄົນທຸກຍາກ ຄຸນຄວາມດີຂອງເພິ່ນກໍຕັ້ງຢູ່ເປັນນິດ."*

ພຣະຄັມພີສ່ວນຫຼາຍແຕ່ຕົ້ນຂຽນເຖິງພວກທີ່ອາສັຍຢູ່ໃນສັງຄົມກະເສດ. ປະຊາຊົນມີຄວາມລຶ້ງເຄີຍກັບການທຳທີ່ດິນ, ລ້ຽງສັດ ແລະປູກຝັງ. ຊາວນາແຕ່ລະຄົນປະມານຜົນເກັບກ່ຽວວ່າ ຈະໄດ້ປະລິມານເທົ່າໃດຕາມສັດສ່ວນຂອງປະລິມານເມັດທີ່ຫວ່ານນັ້ນ. ຜູ້ທີ່ຫວ່ານເມັດພຽງເລັກໜ້ອຍກໍຈະໄດ້ເກັບກ່ຽວພຽງເລັກໜ້ອຍ ຜູ້ທີ່ຫວ່ານຫຼາຍກໍຈະເກັບກ່ຽວໄດ້ຫຼາຍ. ນັ້ນຄືສາເຫດທີ່ທ່ານໂປໂລ ໃຊ້ການປຽບທຽບງ່າຍໆດັ່ງກ່າວກັບການເອົາໃຫ້. ການຫວ່ານຢ່າງບໍ່ຄິດເສັ້ງດາຍໝາຍຄວາມວ່າຢ່າງໃດ? ຖ້າບາງຄົນເວົ້າວ່າ, "ບໍ່ຕ້ອງແພງແຮງ", ໂດຍທົ່ວໄປແລ້ວໝາຍຄວາມວ່າໃຊ້ຄວາມພຍາຍາມທັງໝົດເທົ່າທີ່ທ່ານມີ. ເວລາທ່ານໂປໂລກ່າວວ່າ, ພຣະເຈົ້າ "ບໍ່ໄດ້ຊົງຫວງພຣະບຸດຂອງພຣະອົງເອງ"(ໂຣມ 8:32), ເພິ່ນໝາຍຄວາມວ່າ ພຣະເຈົ້າບໍ່ໄດ້ຫວງພຣະອົງໄວ້. ສະນັ້ນ ເມື່ອທ່ານໃຫ້ຢ່າງຄິດເສັ້ງດາຍ;

ທ່ານຫວງແຫນໄວ້. ເວລາທ່ານໃຫ້ຢ່າງໃຈກ້ວາງຂວາງ, ທ່ານກໍາລັງແບ່ມີຮັບຊັບສິນຈາກພຣະເຈົ້າ. ປຽບທຽບການເພາະປູກຕໍ່, ທ່ານໂປໂລກ່າວວ່າ ຜູ້ທີ່ຫວ່ານຫຼາຍກໍເກັບກ່ຽວໄດ້ຫຼາຍ. ເປັນທີ່ປາກົດແຈ້ງແລ້ວວ່າ ນີ້ອາດເປັນການເຂົ້າໃຈຜິດ. ທ່ານໂປໂລກ່າວກ່ຽວກັບລາງວັນຂອງຄວາມມີນໍ້າໃຈໂດຍບໍ່ຕ້ອງອະທິບາຍເປັນພິເສດ. ພຣະເຈົ້າບໍ່ໄດ້ຕັ້ງກົດການໃຫ້ເພື່ອຮັບ. ຄູຄຣິສຕຽນບາງຄົນເບິ່ງຄືວ່າຈະມີເປົ້າໝາຍ <u>*ຮັບໃນການໃຫ້,*</u> ແຕ່ການມີນໍ້າໃຈບໍ່ສາມາດປູກລົງໃນດິນຂອງການສແວງຫາຄວາມອຸດົມສົມບູນ, ຜົນປໂຍດສ່ວນຕົວຄວາມຮັ່ງມີທາງກາຍ ບໍ່ສາມາດໃຫ້ສັນຍາ, ແຕ່ ພຣະເຈົ້າສັນຍາພຣະພອນຍິ່ງໃຫຍ່ສໍາລັບຜູ້ທີ່ໃຫ້. ການຖວາຍດ້ວຍໃຈເອື້ອເຟື້ອເປັນສັນຍາລັກສອງປະການ: (1) **ສມັກໃຈ.** ການໃຫ້ໃນພຣະຄັມພີໃໝ່ເປັນສັນຍາລັກໂດຍທັງອິສຣະແລະຕັ້ງໃຈ. "ຜູ້ໃດກໍຕາມຄວນໃຫ້ຕາມທີ່ຄາດໝາຍໄວ້ໃນໃຈ". ການໃຫ້ເປັນການສມັກໃຈດ້ວຍຄວາມບໍຣິສຸດໃຈ, ແຕ່ ທ່ານໂປໂລໄດ້ຊຸກຍູ້ໃຫ້ຊາວໂກຣິນໂທມີວິນັຍຄິດສະເລັ່ຽບາງສ່ວນໄວ້ໃນແຜນການແລະເປັນລະບົບ (1ກຣທ 16:2). (2) **ຍິນດີ.** ການໃຫ້ຈະຕ້ອງເປັນການກະທໍາໂດຍບໍ່ຂືນໃຈຫຼື ບັງຂັບ. ບໍ່ເຕັມໃຈໝາຍເຖິງການໃຫ້ດ້ວຍຄວາມເສັຍໃຈຫຼືທຸກໃຈ. ການໃຫ້ບໍ່ແມ່ນການເຮັດດ້ວຍທັສນະຄະຕິທີ່ໂສກເສົ້າຕໍ່ສິ່ງທີ່ແບ່ງແຍກໃຫ້ໄປ. ແທນທີ່ ຈະມີອາການເສົ້າໃຈ ຄວາມຍິນດີຄວນເຕັມລົ້ນຫົວໃຈເມື່ອເຮົາໃຫ້. *"ພຣະເຈົ້າຊົງຮັກຄົນນັ້ນທີ່ໃຫ້ດ້ວຍຊື່ນໃຈຍິນດີ."* ບໍ່ເປັນການຍາກທີ່ຈະແນະນໍາວ່າ ເຫດໃດພຣະເຈົ້າຈຶ່ງຊອບຄົນທີ່ໃຫ້ດ້ວຍໃຈຊື່ນຍິນດີ. ພຣະອົງເອງຊົງເປັນຜູ້ທີ່ໃຫ້ເຊັ່ນນັ້ນ, ແລະພຣະອົງປາຖນາຢາກເຫັນລັກສນະຢ່າງນັ້ນເກີດຜົນໃນຜູ້ທີ່ພຣະອົງສ້າງຂຶ້ນມາຕາມພຣະສາຍາຂອງພຣະອົງ. ນີ້ແມ່ນຄວາມຈິງທີ່ເລີດລໍ້າທີ່ສຸດກ່ຽວກັບພຣະເຈົ້າ. ຖ້າທ່ານເປັນພໍ່ແມ່, ທ່ານເຄືອງໃຈບໍ່ທີ່ເຫັນລູກມີຄວາມສຸກ? ບໍ່ເປັນແນວນັ້ນ. ພວກເຮົາບໍ່ເຊື່ອວ່າພຣະເຈົ້າຜູ້ເປັນພຣະບິດາຈະຖືກລົບກວນດ້ວຍຄວາມສຸກຂອງລູກ. ແທນທີ່ຈະເປັນຢ່າງນັ້ນພຣະອົງກັບຍິນດີກັບຄວາມຍິນດີໃນຄວາມເອື້ອເຟື້ອເພື່ອແຜ່ຂອງທ່ານ. ຖ້າຄວາມຍິນດີບໍ່ທໍາໃຫ້ໃຈຂອງທ່ານເຕັມໄປດ້ວຍຄວາມຫວັງໃນການໃຫ້. ນັ້ນບໍ່ໄດ້ໝາຍຄວາມວ່າພວກເຮົາຕ້ອງງົດການໃຫ້ ຈົນກວ່າການປະພຶດຂອງເຮົາຈະປ່ຽນ. ເຮົາໃຫ້ເປັນທ່າທີຂອງການເຊື່ອຟັງ; ຄວາມຊື່ນຊົມຍິນດີມັກເກີດຂຶ້ນລະຫວ່າງແລະຫຼັງຈາກການເຊື່ອຟັງ. ຈົ່ງໃຫ້ ແລະຊອມເບິ່ງຄວາມຍິນດີທີ່ຈະຕາມມາ. ແລະພຣະເຈົ້າສາມາດດົນບັນດານໃຫ້ພຣະຄຸນທຸກປະການລົ້ນເຫຼືອແກ່ທ່ານ." ເມື່ອເຮົາໃຫ້, ເຮົາບໍ່ຄວນຄໍານຶງເຖິງຄວາມສາມາດຂອງເຮົາ, ແຕ່ ໃຫ້ຄໍານຶງເຖິງຄວາມສາມາດຂອງພຣະເຈົ້າແທນ. ພຣະເຈົ້າຊົງເປັນນໍ້າພຸແຫ່ງພຣະຄຸນອັນບໍ່ສິ້ນສຸດ ສິ່ງຜົນໃຫ້ປະຊາກອນຂອງພຣະອົງຫຼັ່ງໄຫຼດ້ວຍຄວາມມີນໍ້າໃຈ ຂອງພວກເຂົາເອງຢ່າງເຫຼືອລົ້ນ. ຄວາມປາຖນາ ແລະ ຄວາມໝາຍຂອງການເອື້ອເຟື້ອມາຈາກພຣະເຈົ້າ. ພຣະເຈົ້າຜູ້ຊົງຮັກຜູ້ໃຫ້ດ້ວຍຊື່ນໃຈຍິນດີ ຈະຊົງປະທານທຸກສິ່ງທີ່ເຂົາຕ້ອງການໃຫ້ຢ່າງລົ້ນເຫຼືອ. ຊາວໂກຣິນໂທປະເຊີນກັບສິ່ງທ້າທາຍກັບການໃຫ້ດ້ວຍໃຈເອື້ອເຟື້ອຊຶ່ງສາມາດແຕະຕ້ອງການດໍາເນີນຊີວິດຂອງເຂົາ. ທ່ານໂປໂລໄດ້ບອກຢ່າງແຈ່ມແຈ້ງວ່າພຣະເຈົ້າ (ບໍ່ແມ່ນຄວາມໂລບເຫັນແກ່ຕົວຂອງເຂົາ) ສາມາດຕອບສນອງຄວາມຕ້ອງການຂອງເຂົາໄດ້. ເປັນການຍາກທີ່ຈະອະທິບາຍວ່າ, ເມື່ອພວກເຮົາໃຫ້ຄໍາໝັ້ນສັນຍາວ່າຈະໃຫ້ດ້ວຍໃຈເພື່ອແຜ່, ພຣະເຈົ້າຈະດູແລເຮົາ. ເຮົາຄວນສັງເກດອີກວ່າ, ພຣະເຈົ້າຈະດູແລຄວາມຕ້ອງການຂອງເຮົາ, ບໍ່ແມ່ນຄວາມ "ໂລບ" ຂອງເຮົາ. ພຣະເຈົ້າອາດຈະປະທານສິ່ງທີ່ເຂົາປາຖນາໃຫ້ແກ່ເຂົາ. ແຕ່ທ່ານໂປໂລບໍ່ໄດ້ຄໍານຶງເຖິງພຣະພອນເຫຼົ່ານີ້ໃນໂລກທີ່ຕາເຫັນນີ້. ເປົ້າໝາຍສິ່ງຂອງສັກສິດເຫຼົ່ານີ້ບໍ່ໄດ້ຢູ່ທີ່ຄວາມຮັ່ງມີຫຼືຄວາມສຸກສ່ວນຕົວຂອງເຮົາ. ພຣະເຈົ້າປະທານແກ່ຜູ້ເຊື່ອເພື່ອເຂົາອາດ "ມີວຽກງານທີ່ດີທຸກຢ່າງ." ນີ້ອາດຈະໝາຍຄວາມວ່າຜູ້ເຊື່ອຈະປາສຈາກຄວາມກັງວົນນໍາຄວາມຈໍາເປັນແລະຈົດຈໍ່ໃສ່ພຣະບັນຊາຂອງພຣະເຈົ້າ.

*ເມື່ອໃດທ່ານເຫັນຫຼັກຄໍາສອນຂອງການຫວ່ານແລະການເກັບກ່ຽວຢ່າງເຕັມທີ?*

## 2. 2 ໂກຣິນໂທ 9:10-11.

*10. ຝ່າຍພຣະອົງຜູ້ຊົງປະທານແນວປູກໃຫ້ແກ່ຜູ້ຫວ່ານ ກັບທັງອາຫານສໍາລັບກິນ ຈະຊົງປະທານແນວປູກໃຫ້ແກ່ເຈົ້າທັງຫຼາຍ ທັງຈະຊົງບັນດານໃຫ້ແນວປູກນັ້ນທະວີຂຶ້ນ ຊໍ້າຈະຊົງບັນດານໃຫ້ຜົນແຫ່ງຄຸນຄວາມດີຂອງພວກເຈົ້ານັ້ນຈະເຣີນຂຶ້ນ. 11. ໂດຍຊົງໂຜດໃຫ້ເຈົ້າທັງຫຼາຍຮັ່ງມີດ້ວຍສິ່ງຂອງຢ່າງບໍຣິບູນ ເພື່ອໃຫ້ພວກເຈົ້າມີຂອງແຈກຢາຍຢ່າງໃຈກວ້າງຂວາງ ຊຶ່ງເຮົາໄດ້ນໍາໄປແຈກຢາຍ ຈຶ່ງເປັນເຫດໃຫ້ເກີດການຂອບພຣະຄຸນຕໍ່ພຣະເຈົ້າ.*

ຂໍ້10 ຄືວ່າຊີ້ໄປຫາທັງ ເອຊາຢາ 55:10 ແລະໂຮເຊອາ10:12. ຂໍ້ນີ້ຊີ້ໃຫ້ເຫັນແນວຄິດແຝດເຣື່ອງການເງິນຈາກພຣະທັມຄັມພີ: (1) ພຣະເຈົ້າເປັນເຈົ້າຂອງທຸກສິ່ງ, ແລະ (2) ການດູແລຂອງຜູ້ເຊື່ອໃນສິ່ງພຣະເຈົ້າມອບໝາຍໃຫ້. ການເປັນເຈົ້າຂອງ ຂອງພຣະເຈົ້າໄດ້ຖືກສື່ສານໂດຍພາສາກຣີກ "ຈັດຫາໃຫ້." ຄຳນີ້ແມ່ນບ່ອນທີ່ເຮົາໄດ້ຮັບພາສາອັງກິດ "chorus." ຄົນມັກຍົກຍ້ອງຄວາມຈະເລີນຮຸ່ງເຮືອງຂອງຕົນເນື່ອງມາຈາກຄວາມຄິດສ້າງສັນຈັນຍາບັນໃນການທຳງານ ຄວາມຮູ້ທີ່ສະສົມມາ ຫຼືຄວາມສລຽວສລາດຂອງຕົນເອງ. ເຖິງຢ່າງໃດກໍຕາມ, ມູມມອງໂລກໃນພຣະຄັມພີໝາຍເຖິງຜົນສຳເຣັດ ແລະການຈັດຫາຂອງພຣະເຈົ້າທັງໝົດ. ຈົ່ງພິຈາຣະນາຄຳກ່າວຂອງໂມເຊໃນພຣະບັນຍັດສອງ 8:17-18; *[17]ດັ່ງນັ້ນ ພວກທ່ານຢ່າຄິດວ່າຊັບນີ້ຫາມາໄດ້ດ້ວຍກຳລັງແລະເຫື່ອແຮງຂອງພວກທ່ານເອງ. [18]ຈົ່ງຈື່ໄວ້ວ່າ ພວກທ່ານຮັ່ງມີຍ້ອນເຫື່ອແຮງທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ພຣະອົງຊົງເຮັດດັ່ງນີ້ ກໍຍ້ອນວ່າຊົງສັດຊື່ຕໍ່ຄຳໝັ້ນສັນຍານັ້ນຈົນເທົ່າທຸກມື້ນີ້.* ຄຳເວົ້າໂດຍກົງເຫຼົ່ານີ້ເຕືອນພວກເຮົາວ່າພຣະເຈົ້າຄວນໄດ້ຮັບຄເຣດິດແມ້ແຕ່ເງິນທີ່ພວກເຮົາ "ໄດ້ຮັບ." ພຣະອົງປະທານຄວາມສາມາດແກ່ເຮົາໃຫ້ໄດ້ຮັບຄ່າຄອງຊີບ. ການຫຼົງລືມຫຼັກທັມນີ້ນຳໄປສູ່ຄວາມລະອຽດອ່ອນແຕ່ແນ່ນອນອວດຕົວ. ຂໍ້10 ຊີ້ໃຫ້ເຫັນພຣະພອນອັນໃຫຍ່. ທ່ານໂປໂລກ່າວວ່າ "ພຣະເຈົ້າຈະຊົງບັນດານໃຫ້ແນວປູກນັ້ນທະວີຂຶ້ນ, ຊໍ້າຈະຊົງບັນດານໃຫ້ຜົນແຫ່ງຄວາມຊອບທັມຂອງພວກເຈົ້າຈະເລີນຂຶ້ນ." ຫົວຂໍ້ກະສິກັມຍັງມີຕໍ່, ແຕ່ນີ້ບໍ່ແມ່ນຄຳສັນຍາທີ່ເປົ່າຫວ່າງສຳລັບຜູ້ເຊື່ອທີ່ຫວັງໃຫ້ເງິນເພີ່ມຂຶ້ນເພາະຄວາມເຊື່ອຂອງທ່ານ. ໝາຍຄວາມວ່າແຕ່ລະຢ່າງເພີ່ມຂຶ້ນໃນຄວາມຮັ່ງມີຂອງເຮົາແມ່ນມາຈາກພຣະເຈົ້າ. ເຖິງແມ່ນວ່າຜົນຈະໄດ້ມາຈາກວຽກທີ່ໜັກ ແລະຈາກຄວາມສຳເຣັດດ້ານທຸຣະກິດກໍຕາມ, ພຣະຜູ້ເປັນເຈົ້າຮັບຜິດຊອບໃນການເພີ່ມທະວີ. ມີການພົວພັນລະຫວ່າງພຣະເຈົ້າເພີ່ມທະວີ "ແນວປູກ"ແລະ"ຜົນເກັບກ່ຽວຂອງຄວາມຊອບທັມເພີ່ມທະວີຂຶ້ນ." ໃນເມື່ອພຣະເຈົ້າອວຍພອນເຮົາ ແລະພວກເຮົາຕອບສນອງດ້ວຍຄວາມເອື້ອເຟື້ອ, ພຣະຜູ້ເປັນເຈົ້າໃຫ້ພວກເຮົາເກັບກ່ຽວຄວາມໂປດປານຝ່າຍວິນຍານ. ໃຈເອື້ອເຟື້ອສອນການດຳເນີນຊີວິດທີ່ຖືກຕ້ອງໃນຊີວິດຄຣິສະຕຽນທຸກດ້ານ. ຊີວິດຝ່າຍວິນຍານຂອງເຮົາໄດ້ຮັບການຍູ້ໜູນອັນສຳຄັນທຸກຄັ້ງທີ່ເຮົາເບິ່ງແລະນຳໃຊ້ເຂົ້າຂອງ ຂອງພຣະເຈົ້າຢ່າງສລາດ. ພຣະເຈົ້າບັນດານໃຫ້ລັກສນະຂອງພວກເຮົາເຕີບໃຫຍ່ຂຶ້ນ. ພິຈາຣະນາຂໍ້ 11 ຢ່າງຣະມັດຣະວັງ," ຊົງໂຜດໃຫ້ເຈົ້າທັງຫຼາຍຮັ່ງມີດ້ວຍສິ່ງຂອງຢ່າງບໍຣິບູນ ເພື່ອໃຫ້ພວກເຈົ້າມີຂອງແຈກຢາຍຢ່າງໃຈກວ້າງຂວາງ." ຜູ້ທີ່ສົ່ງເສີມຄວາມຈະເລີນຮຸ່ງເຮືອງຂອງພຣະກິດຕິຄຸນ ຈະກ່າວວ່າຄວາມຮັ່ງມີໃນທຸກດ້ານ ຈະລວມເຖິງພຣະພອນທາງດ້ານການເງິນພ້ອມ. ໃນເມື່ອພຣະພອນທາງດ້ານການເງິນແມ່ນຂອງປະທານຈາກພຣະເຈົ້າ, ຂໍ້ນີ້ບໍໄດ້ຮັບປະກັນຈຳນວນແນ່ນອນໃນຄວາມສຳເຣັດດ້ານການເງິນສຳລັບຜູ້ເຊື່ອ. ແທນທີ່ຈະເປັນເຊັ່ນນັ້ນ, ຂໍ້ນີ້ບອກເຮົາວ່າຍິ່ງໃຫ້ຍິ່ງມີໃຫ້ແກ່ຜູ້ອື່ນ. ຂໍ້ 11 ລົງທ້າຍດ້ວຍການພົວພັນລະຫວ່າງການໃຫ້ແລະແລະຄວາມກະຕັນຍູ. ທ່ານໂປໂລກ່າວວ່າ ໃຈກ້ວາງຂວາງ "ສົ່ງຜົນການຂອບຄຸນພຣະເຈົ້າໂດຍເຮົາ." ເວົ້າງ່າຍໆກໍຄືພຣະເຈົ້າໄດ້ຮັບກຽດຈາກການແບ່ງປັນຂອງຜູ້ເຊື່ອ. ຫຼັກທັມນີ້ຊວນໃຫ້ນຶກເຖິງ ມທ 5:16 ວ່າ, *"ເໝືອນຢ່າງນັ້ນແຫຼະ, ພວກທ່ານຈົ່ງສ່ອງແຈ້ງແກ່ຄົນທັງປວງເພື່ອວ່າ, ເມື່ອເຂົາເຫັນການດີທີ່ພວກທ່ານເຮັດເຂົາຈະໄດ້ສັຣເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສວັນ."*

## 3. 2 ໂກຣິນໂທ 9:12-15.

*12. ເພາະວ່າການຮັບໃຊ້ໃນການບົວລະບັດນັ້ນບໍ່ໃຊ່ເປັນການຊ່ອຍພວກໄພ່ພົນຂອງພຣະອົງທີ່ຂາດເຂີນເທົ່ານັ້ນ ແຕ່ຍັງເປັນເຫດໃຫ້ມີການຂອບພຣະຄຸນພຣະເຈົ້າຫຼວງຫຼາຍອີກດ້ວຍ. 13. ແລະເນື່ອງຈາກຜົນແຫ່ງການບົວລະບັດນັ້ນ ເຂົາຈຶ່ງສັນລະເສີນພຣະເຈົ້າ ໂດຍເຫດທີ່ເຈົ້າທັງຫຼາຍຍອມຟັງແລະຕັ້ງໃຈຢູ່ໃນອຳນາດຂ່າວປະເສີດເລື້ອງພຣະຄຣິດ ແລະເພາະເຫດພວກເຈົ້າໄດ້ແຈກຈ່າຍແກ່ເຂົາແລະແກ່ຄົນທັງປວງດ້ວຍໃຈກວ້າງຂວາງ. 14. ຝ່າຍເຂົາກໍຈະຮັກແພງແລະອ້ອນວອນເພື່ອເຈົ້າທັງຫຼາຍ ເພາະເຫດພຣະຄຸນຂອງພຣະເຈົ້າທີ່ສະຖິດຢູ່ໃນພວກເຈົ້າຢ່າງລົ້ນເຫຼືອ. 15. ຈົ່ງຂອບພຣະຄຸນພຣະເຈົ້າເພາະຂອງພຣະຣາຊທານອັນເຫຼືອທີ່ຈະພັນລະນາໃຫ້ສິ້ນສຸດໄດ້.*

ຂໍ້12 ເລີ່ມຕົ້ນດ້ວຍການອ້າງເຖິງການໃຫ້ ເປັນ "ພັນທະກິດການຮັບໃຊ້ນີ້." ຖ້ອຍຄຳນີ້ແຕ່ເດີມໝາຍເຖິງບຸກຄົນທີ່ຮັບໃຊ້ສາທາຣະນະໂດຍອອກຄ່າໃຊ້ຈ່າຍເອງ. ຄວາມໝາຍກໍຄືໃຈກ້ວາງຂວາງຕ້ອງແລກມາດ້ວຍຄ່າໃຊ້ຈ່າຍສ່ວນຕົວຂອງແຕ່ລະບຸກຄົນ ແຕ່ຜົນລັບທີ່

ຍິ່ງໃຫຍ່ສອງປະການຈະຕາມມາ.

- **ຜົນດີຈາກໃຈກ້ວາງຂວາງແມ່ນພຣະເຈົ້າໃຊ້ເຮົາສນອງ "ຄວາມຕ້ອງການຂອງຜູ້ເຊື່ອ."** ຄຣິສະຕຽນຊ່ວຍສນອງຄວາມຕ້ອງການຂອງຄົນອື່ນ. ນັ້ນແມ່ນຄວາມຮູ້ສຶກທີ່ຄົນເຮົາໄດ້ຮັບຈາກຄຣິສຕະຈັກແລກໃນ ກຈກ 2:43-44, ຍ້ອນວ່າເຂົາຖືຊັບສິນຂອງເຂົາ, ເປັນເຣື່ອງທັມມະດາ, ແລະເຣື່ອງສມັກໃຈຊ່ວຍເຫຼືອຜູ້ເຊື່ອທີ່ມີຄວາມຕ້ອງການ.
- **ການບໍຣິການຮັບໃຊ້ຂອງເຮົາແລະໃຈກ້ວາງຂວາງປ່ຽມລົ້ນ "ໃນການສະແດງຄວາມຂອບຄຸນພຣະເຈົ້າຫຼາຍປະການ."** ທ່າມກາງສິ່ງອື່ນ, ຖ້ອຍຄໍານີ້ ອາດໝາຍເຖິງວ່າ ຄວາມຕ້ອງການໃນເຢຣູຊາເລັມແລະຜູ້ເຊື່ອທຸກຄົນໃນປາແລສໄຕນ໌ຈະໄດ້ຂອບຄຸນພຣະເຈົ້າສໍາລັບຄວາມຫ່ວງໃຍ ແລະການຊ່ວຍເຫຼືອໂບດຕ່າງດ້າວ. ຄວາມຕ້ອງການໄດ້ຮັບການຕອບສນອງແລະປະຊາກອນຮັບຮູ້ພຣະຫັດພຣະເຈົ້າຍັງທໍາງານຢູ່.

ນຶ່ງໃນສິ່ງທີ່ໃຫຍ່ກ່ຽວກັບການໃຫ້ແມ່ນມັນຢືນຢັນສິ່ງນຶ່ງ. ທ່ານໂປໂລໄດ້ເວົ້າໃນຂໍ້ 13 ໂດຍກ່າວວ່າ, "ເນື່ອງຈາກຜົນແຫ່ງການບໍຣິບັດນັ້ນ. "ຄໍາວ່າ "ຫຼັກຖານ" ມາຈາກຄໍາດຽວກັນທີ່ໝາຍຄວາມວ່າ "ທົດສອບ." ມີຄວາມຮູ້ສຶກວ່າຄວາມມີໃຈກ້ວາງຂວາງຂອງຄົນໆນຶ່ງທົດສອບຄວາມເຊື່ອຂອງຄົນໆນັ້ນວ່າຈິງບໍ່. ສັງເກດເບິ່ງການພົວພັນຣະຫວ່າງພຣະຄຸນ ແລະ ໃຈກ້ວາງຂວາງ. ການໃຫ້ຄືຫຼັກຖານທີ່ສະແດງເຖິງ "ພຣະຄຸນອັນລໍ້າເລີດຂອງພຣະເຈົ້າໃນທ່ານ." ເມື່ອຜູ້ເຊື່ອມີປະສົບການກັບພຣະຄຸນຂອງພຣະເຈົ້າ, ຫຼັກຖານສິ່ງນຶ່ງແມ່ນຄວາມມີໃຈຢາກເປັນຄົນມີໃຈກ້ວາງຂວາງ. ເປັນທີ່ປາກົດແຈ້ງແລ້ວວ່າ ການມີໃຈກ້ວາງຂວາງມີຜົນສິ່ງໃຫ້ມີການໃຫ້, ແຕ່ຈະມີຜົນກະທົບແກ່ຜູ້ຮັບຢ່າງໃດແດ່? ໃນຂໍ້14, ທ່ານໂປໂລອະທິບາຍຜົນສະທ້ອນຂອງການຖວາຍ ຍ່ອມເປັນຫຼັກຖານແກ່ຜູ້ເຊື່ອທີ່ຍາກຈົນໃນກຸງເຢຣູຊາເລັມ. ທ່ານໂປໂລແນໃສ່ຄວາມຮັກເລີກເຊິ່ງຈະຕ້ອງມີໃນທ່າມກາງຄຣິສະຕຽນໃນດ້ານຕ່າງໆ, ເບື້ອງຫຼັງແຕກຕ່າງກັນ, ແລະລະດັບລາຍໄດ້ແຕກຕ່າງກັນ. ເພິ່ນກ່າວວ່າ, ໃຈກ້ວາງຂວາງຂອງທ່ານຈະຊ່ວຍປະສານຄວາມສັມພັນອັນແໜ້ນແຟ້ນກັບຄອບຄົວທີ່ດ້ອຍໂອກາດຂອງທ່ານ.

| *ເຫດໃດການໃຫ້ດ້ວຍໃຈກ້ວາງຂວາງຈຶ່ງເປັນສິ່ງສໍາຄັນໃນຊີວິດຄຣິສະຕຽນຂອງທ່ານ?* |
|---|

## ນໍາໃຊ້ໃນຊີວິດ

ພວກເຮົາຕ້ອງໃຫ້ດ້ວຍໃຈກ້ວາງຂວາງແລະວາງໃຈພຣະເຈົ້າກັບຜົນທີ່ຈະຕາມມາ. ຈົ່ງເລືອກນໍາໃຊ້ການນໍາໃຊ້ຂໍ້ໃດນຶ່ງຕໍ່ລົງໄປນີ້:

- **ຂອບພຣະຄຸນ.** ເອົາວັນນຶ່ງໃນອາທິດນີ້ເປັນວັນຈົດຈໍ່ຄວາມກະຕັນຍູ. ຕັ້ງໂມງປຸກໃຫ້ດັງທຸກຊົ່ວໂມງ ໃຊ້ເວລານຶ່ງນາທີເພື່ອຂອບຄຸນ. ຄວາມກະຕັນຍູເປັນດິນທີ່ສົມບູນໃນການຫຼໍ່ລ້ຽງຫົວໃຈແຫ່ງການເອື້ອເຟື້ອເພື່ອແຜ່.
- **ຖວາຍ.** ສນັບສນູນຜູ້ຮັບໃຊ້ແລະການປະກາດໂບດຂອງທ່ານໂດຍການຖວາຍດ້ວຍຄວາມເຊື່ອ, ເປັນປະຈໍາ. ຖ້າທ່ານຖວາຍສນັບສນູນພັນທະກິດອື່ນທີ່ມີຄຣິສະຕຽນເປັນສູນກາງ, ຍອດຢ້ຽມ! ແຕ່ໃຫ້ລໍາດັບທໍາອິດຂອງການຖວາຍໂດຍຜ່ານທາງຄຣິສຕະຈັກຄອບຄົວຂອງທ່ານ.
- **ເພີ່ມເຕີມ.** ຈົ່ງຕັ້ງເປົ້າໝາຍເພີ່ມການຖວາຍຊັບອູ້ມຊູໂບດທ້ອງຖິ່ນຂອງທ່ານ. ຖ້າທ່ານເປັນຜູ້ຖວາຍແລ້ວຢ່າງໜ້ອຍນຶ່ງສ່ວນສິບ, ຈົ່ງອະທິຖານວ່າທ່ານຈະເພີ່ມເປີເຊັນຂຶ້ນຕື່ມຢ່າງໃດ. ທ່ານອາດຈະຕ້ອງພິຈາຣະນາໜັກທີ່ປັບປ່ຽນບາງຢ່າງທີ່ທ່ານສາມາດເຮັດໄດ້ຂອງງົບປະມານສ່ວນຕົວເພື່ອເຮັດໃຫ້ສິ່ງນີ້ເປັນຈິງ ແຕ່ຈົ່ງວາງໃຈພຣະເຈົ້າກັບໃຈເອື້ອເຟື້ອເພື່ອແຜ່ຂອງທ່ານ.

**ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**